University of Luxembourg
Faculty of Law,
Economics and Finance

Referencing

# ການເຝິກອົບຮົມໃນຫົວຂໍ້ ການອ້າງອີງແຫຼ່ງຂໍ້ມູນ

By Florence D’Ath

UNIVERSITÉ DU LUXEMBOURG

National University of Laos, Vientiane

# ການເຝິກອົບຮົມຄັ້ງນີ້ມີເນື້ອຫາຫຍັງແດ່?

ການຂຽນບົດຄວາມໃນຂົງເຂດກົດໝາຍໂດຍສ່ວນຫຼາຍແລ້ວຈະມີການອ້າງອີງຂໍ້ມູນຈາກພາຍນອກເປັນຕົ້ນແມ່ນ:

- ປຶ້ມຕໍາລາ, ບົດຄວາມ ຫຼື ເອກະສານທີ່ເປັນລາຍລັກອັກສອນ

ອື່ນໆກ່ຽວກັບຫົວຂໍ້

- ກົດໝາຍທີ່ກ່ຽວຂ້ອງ ຫຼື

ກົດໝາຍຄໍາຕັດສິນຂອງສານ (Case Law)

- ບົດຄວາມຈາກໜັງສືພິມ
- ລາຍການໂທລະພາບ ຫຼື ສາລະຄະດີຕ່າງໆ
- ບົດສໍາພາດ (ທາງວິຊາການ ຫຼື "ບົດສໍາພາດເກັບກໍາຂໍ້ມູນພາກສະໜາມ")



# ການເຝິກອົບຮົມຄັ້ງນີ້ມີເນື້ອຫາຫຍັງແດ່?

ພາຍຫຼັງທີ່ໄດ້ຂໍ້ມູນ, ຄວາມຮູ້ພຽງພໍແລ້ວ ເຮົາສາມາດເລີ່ມຂຽນ ຂໍ້ຄິດ/ຄໍາຄິດເຫັນ ຂອງຕົນກ່ຽວກັບຫົວຂໍ້.

ໃນການຂຽນດັ່ງກ່າວນີ້, ເຮົາຕ້ອງໄດ້ ຂຽນຊໍ້າ ຫຼື ໃຊ້ຄໍາເວົ້າໃໝ່ເພື່ອຢໍ້າຄືນ ສິ່ງທີ່ຖອດຖອນໄດ້ ຈາກແຫຼ່ງຂໍ້ມູນອື່ນ (ຕົວຢ່າງ: ບົດຄວາມຈາກ ໜັງສືພິມອອນລາຍ ຫຼື ປຶ້ມຕໍາລາ) ການອ້າງອີງແຫຼ່ງຂໍ້ມູນນີ້ເປັນສິ່ງທີ່ສໍາຄັນຫຼາຍ.



# ການເຝິກອົບຮົມຄັ້ງນີ້ມີເນື້ອຫາຫຍັງແດ່?

UNIVERSITÉ DU LUXEMBOURG

- ການເຝິກອົບຮົມຄັ້ງນີ້ແມ່ນມີເນື້ອຫາກ່ຽວກັບ ການອ້າງອີງແຫຼ່ງຂໍ້ມູນ ເຊິ່ງແມ່ນການໃສ່ຂໍ້ມູນອ້າງອີງຈາກພາຍນອກເຂົ້າໃນບົດຄວາມ.
- ການອ້າງອີງແຫຼ່ງຂໍ້ມູນສາມາດຖືກກໍານົດວ່າເປັນການກ່າວອ້າງເຖິງນັກປະພັນ, ໜັງສື ແລະ ອື່ນໆ ທີ່ຖືກກ່າວໃນສ່ວນໜຶ່ງຂອງບົດຄວາມ ເຊິ່ງສະແດງໃຫ້ຮູ້ວ່າຂໍ້ມູນດັ່ງກ່າວນັ້ນແມ່ນຖືກພົບເຫັນມາຈາກແຫຼ່ງໃດ.

(ນິຍາມດັ່ງກ່າວສາມາດພົບເຫັນໄດ້ຈາກວັດຈະນານຸກົມອອນໄລຂອງແຄມບຣິດ)

ສິ່ງນີ້ແມ່ນການອ້າງອີງແຫຼ່ງຂໍ້ມູນ!

# ໂຄງຮ່າງຂອງການເຝິກອົບຮົມ

1. ການອ້າງອີງແຫຼ່ງຂໍ້ມູນ: ເປັນຫຍັງມັນຈຶ່ງມີຄວາມສໍາຄັນ?
2. ຈະອ້າງອີງຂໍ້ມູນແນວໃດໃຫ້ຖືກຕ້ອງ? (ຮູບແບບທີ່ແຕກຕ່າງກັນ)
3. ແບບເຝິກຫັດພາກປະຕິບັດ

# ການອ້າງອີງແຫລ່ງຂໍ້ມູນ: ເປັນຫຍັງມັນຈຶ່ງມີຄວາມສຳຄັນ?

UNIVERSITÉ DU LUXEMBOURG

# ເປັນຫຍັງມັນຈຶ່ງມີຄວາມສຳຄັນ?

## ມີສາມເຫດຜົນຫຼັກຄື:

- ເຄົາລົບ ລິຂະສິດ
- ຄວາມຊື່ສັດ ທາງປັນຍາ
- ຄວາມໜ້າເຊື່ອ ຖື

# Example

ໃນປະເທດລຸກຊຳບວກ, ແມ່ຍິງໄດ້ຮັບສິດໃນການລົງຄະແນນເລືອກຕັ້ງໃນວັນທີ 8 ພຶດສະພາ ປີ ຄສ 1919.* ສະພາຮ່າງ ກົດໝາຍກ່ຽວກັບ ການອະນຸຍາດໃຫ້ແມ່ຍິງ ເຂົ້າຮ່ວມການເລືອກຕັ້ງ.

ກົດໝາຍໃດ??

* Wikipedia, https://en.wikipedia.org/wiki/Timeline_of_women%27s_suffrage#1919.

ແຫຼ່ງຂໍ້ມູນນີ້ອາດຈະບໍ່ມີຄວາມໜ້າເຊື່ອຖື/ສົມບູນ. ມັນບໍ່ມີຄວາມໜ້າເຊື່ອຖື

# ຕົວຢ່າງ

ໃນປະເທດລຸກຊຳບວກ, ແມ່ຍິງໄດ້ຮັບສິດໃນການລົງຄະແນນເລືອກຕັ້ງໃນວັນທີ 8 ພຶດສະພາ ປີ ຄສ 1919.* ເຊິ່ງໃນມື້ນັ້ນເອງ, ສະພາຮ່າງລັດຖະທຳມະນູນຂອງປະເທດລຸກຊຳບວກໄດ້ລົງມະຕິເຫັນດີໃນເລື່ອງການໃຫ້ສິດເສລີພາບໃນການລົງຄະແນນສຽງເລືອກຕັ້ງ, ໂດຍການຂະຫຍາຍສິດດັ່ງກ່າວໃຫ້ແກ່ປະຊາຊົນທຸກຄົນທີ່ມີອາຍຸແຕ່ 21 ປີຂຶ້ນໄປໂດຍປາສະຈາກການຈຳແນກທາງເພດ (39 ສຽງເຫັນດີ, 11 ສຽງຄັດຄ້ານ ແລະ ງົດອອກສຽງ 1 ຄົນ).**

ຂ້ອຍໄດ້ອ້າງເຖິງກົດໝາຍສະບັບຕົ້ນຕໍລວມທັງຜົນງານຂອງນັກຂ່ຽວຊານທີ່ມີຊື່ສຽງເພື່ອສະແດງໃຫ້ເຫັນວ່າຂໍ້ມູນດັ່ງກ່າວມີຮາກຖານທີ່ໜັກແໜ້ນ ແລະ ເຊື່ອຖືໄດ້ ພ້ອມທັງສະແດງຄວາມຊື່ສັດຕໍ່ຜົນງານທາງປັນຍາຂອງຜູ້ຂຽນ.

* Law of du 15 May 1919 revising article 52 of the Constitution, published on 16/05/1919 in Memorial A33, Permalink ELI http://data.legilux.public.lu/eli/etat/leg/loi/1919/05/15/n3/jo .

** M. Engel, R. Wagener, *Die Einführung des Frauenwahlrechts in Luxemburg*, in Goetzinger, Lorang, Wagener (eds) « Wenn nun wir Frauen auch das Wort ergreifen… », Luxembourg 1997, p. 90-92.

# ການອ້າງອີງເຫຼ່ງຂໍ້ມູນໃນຂົງເຂດກົດໝາຍ: ຈະເຮັດແນວໃດໃຫ້ຖືກຕ້ອງ?

# ຈະເຮັດແນວໃດໃຫ້ຖືກຕ້ອງ?



ໃນຂົງເຂດກົດໝາຍເມື່ອມີການອ້າງອີງເຖິງຊື່ຂອງຜູ້ຂຽນ, ມັນເປັນສິ່ງສຳຄັນທີ່ຈະຕ້ອງຮັບປະກັນວ່າ:

a) ຄຳເຫັນ/ແນວຄວາມຄິດຂອງຜູ້ແຕ່ງແມ່ນຖືກສ້າງຂຶ້ນຄືນ/ຖ່າຍທອດຢ່າງຖືກຕ້ອງ;

b) ການອ້າງອີງຂໍ້ມູນເອງຈະຕ້ອງຖືກຕ້ອງ (ແຫຼ່ງຂໍ້ມູນ).

# ຈະເຮັດແນວໃດໃຫ້ຖືກຕ້ອງ?

a) ຄໍາຄິດເຫັນ/ແນວຄວາມຄິດຂອງຜູ້ແຕ່ງນັ້ນຖືກຖ່າຍທອດໄດ້ຢ່າງຖືກຕ້ອງແລ້ວບໍ່?

ມີສອງວິທີໃນການຜະລິດຊໍ້າແນວຄວາມຄິດ:

- - ການໃສ່ວົງຢືມ= ການຄັດລອກ ແລະ ວາງ (ສ່ວນໜຶ່ງ) ຂອງຂໍ້ຄວາມ
- - ການປ່ຽນຂໍ້ຄວາມດັ້ງເດີມໃຫ້ເປັນຄໍາເວົ້າຕົນເອງໂດຍທີ່ຄວາມໝາຍເດີມບໍ່ຖືກປ່ຽນ (Paraphrasing) = ການອະທິບາຍຄືນແນວຄວາມຄິດ ແລະ ຄໍາຄິດເຫັນໂດຍການນໍາໃຊ້ຄໍາເວົ້າແບບໃໝ່

# ຕົວຢ່າງ

## ການໃສ່ວົງຢືມ (Quotation) ກັບ ການປ່ຽນຂໍ້ຄວາມດັ້ງເດີມໃຫ້ເປັນຄໍາເວົ້າຕົນເອງໂດຍທີ່ຄວາມໝາຍເດີມບໍ່ຖືກປ່ຽນ (Paraphrasing):

- ມາດຕາ 38 ຂອງລັດຖະທໍາມະນູນແຫ່ງ ສປປ ລາວ ກໍານົດໄວ້ວ່າ: "ພົນລະເມືອງລາວຍິງຊາຍ ມີສິດເທົ່າທຽມກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທໍາ, ສັງຄົມ ແລະ ຄອບຄົວ."

= ການໃສ່ວົງຢືມ ("….")

- ລັດຖະທໍາມະນູນແຫ່ງ ສປປ ລາວ ກໍານົດໄວ້ວ່າ ພົນລະເມືອງທຸກຄົນຕ້ອງໄດ້ຮັບການປະຕິບັດຢ່າງເທົ່າທຽມກັນ, ລວມທັງດ້ານການເມືອງ. *

= ການປ່ຽນຂໍ້ຄວາມດັ້ງເດີມໃຫ້ເປັນຄໍາເວົ້າຕົນເອງໂດຍທີ່ຄວາມໝາຍເດີມບໍ່ຖືກປ່ຽນ (Paraphrasing)

* ມາດຕາ 38 ຂອງລັດຖະທໍາມະນູນແຫ່ງ ສປປ ລາວ ປີ 1991 (consolidated version, ສະບັບແປພາສາອັງກິດຈາກເວັບໄຊ ( https://www.constituteproject.org).

# ຈະເຮັດແນວໃດໃຫ້ຖືກຕ້ອງ?

UNIVERSITÉ DU LUXEMBOURG

## b) ການອ້າງອີງແຫຼ່ງຂໍ້ມູນນັ້ນຖືກຕ້ອງ ຫຼື ບໍ?

- ເວລາຂຽນເອກະສານອ້າງອີງຈຶ່ງມີຄວາມຈຳເປັນທີ່ຈະຕ້ອງເຮັດໃຫ້ **ຖືກຕ້ອງ** ແລະ **ຄົບຖ້ວນສົມບູນ** ເພື່ອໃຫ້ຜູ້ອ່ານສາມາດຊອກຫາທີ່ມາຂອງຂໍ້ມູນຕົ້ນຕໍນັ້ນໄດ້ (ຕົວຢ່າງ. ຊື່ຂອງຜູ້ຂຽນ, ຊື່ຂອງປຶ້ມ, ຜູ້ດັດແກ້, ປີຈັດພິມ, ເລກໜ້າເຈ້ຍຂອງປຶ້ມ);
- **ມີຫຼາຍ** **ຫຼັກການ**ໃນການຂຽນເອກະສານອ້າງອີງ, ຂຶ້ນກັບ**ລັກສະນະ ແລະ ຮູບແບບ**ທີ່ຖືກນຳໃຊ້. ຕ້ອງຮັບປະກັນວ່າມີການນຳໃຊ້ຮູບແບບດຽວກັນຕະຫຼອດການອ້າງອີງໃນເນື້ອຫາໜຶ່ງ.

UNIVERSITÉ DU LUXEMBOURG

## ການໃສ່ວົງຢືມ (Quotation) ກັບ ການປ່ຽນຂໍ້ຄວາມດັ້ງເດີມໃຫ້ເປັນຄໍາເວົ້າຕົນເອງໂດຍທີ່ຄວາມໝາຍເດີມບໍ່ຖືກປ່ຽນ (Paraphrasing):

ມາດຕາ 37

- ~~ມາດຕາ 38~~ ຂອງລັດຖະທໍາມະນູນແຫ່ງ ສປປ ລາວ ກໍານົດໄວ້ວ່າ: "ພົນລະເມືອງລາວຍິງຊາຍມີສິດເທົ່າທຽມກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທໍາ, ສັງຄົມ ແລະ ຄອບຄົວ."

= ການໃສ່ວົງຢືມ ("….")

- ລັດຖະທໍາມະນູນແຫ່ງ ສປປ ລາວ ກໍານົດໄວ້ວ່າ ພົນລະເມືອງທຸກຄົນຕ້ອງໄດ້ຮັບການປະຕິບັດຢ່າງເທົ່າທຽມກັນ, ລວມທັງດ້ານການເມືອງ. *

= ການປ່ຽນຂໍ້ຄວາມດັ້ງເດີມໃຫ້ເປັນຄໍາເວົ້າຕົນເອງໂດຍທີ່ຄວາມໝາຍເດີມບໍ່ຖືກປ່ຽນ (Paraphrasing)

ມາດຕາ 37

* ~~Article 38~~ of the Lao People's Democratic Republic's Constitution of 1991 (consolidated version), translated to English and made available by the Constitute Project ( https://www.constituteproject.org).

# ຈະເຮັດແນວໃດໃຫ້ຖືກຕ້ອງ?



ຮູບແບບໃນການເຮັດເອກະສານອ້າງອີງທີ່ນິຍົມຫຼາຍທີ່ສຸດໃນຂົງເຂດກົດໝາຍ/ສັງຄົມສາດມີຄື:

- ແບບຊິຄາໂກ (Chicago) (ສ່ວນໃຫຍ່ໃຊ້ຢູ່ໃນທະວີບອາຊີ);
- ແບບມາດຕະຖານອອກຟອດ ຫຼື OSCOLA [Oxford Standard for the Citation of Legal Authorities] (ສ່ວນຫຼາຍໃຊ້ໃນທະວີບເອີຣົບ)
- ແບບຮາເວີດ [Harvard (ສ່ວນຫຼາຍໃຊ້ໃນປະເທດສະຫະລັດອາເມຣິກາ)
- ແບບ MLA (Modern Language Association)
- ແບບ APA (American Psychological Association)

# ຕົວຢ່າງ (1)

## ການອ້າງອີງເຖິງປຶ້ມ:

- ແບບຊິຄາໂກ (Chicago) : Marie-Vivien, Delphine. *The Protection of Geographical Indications in India: A New Perspective on the French and European Experience*. SAGE Law. 2015.

- ແບບ APA: Marie-Vivien, D. (2015). *The protection of geographical indications in India : A new perspective on the French and European experience* (SAGE law).

- ແບບຮາເວີດ (Harvard): Marie-Vivien, D. (2015) *The protection of geographical indications in India : a new perspective on the French and European experience.* SAGE law.



# ເຕັກນິກ ແລະ ເຄັດລັບ

ຖານຂໍ້ມູນວິຊາການສ່ວນໃຫຍ່ໄດ້ຈັດຮູບແບບເອກະສານອ້າງອີງເປັນທີ່ຮຽບຮ້ອຍແລ້ວ: ພຽງແຕ່ທ່ານຕ້ອງເລືອກວ່າຈະນຳໃຊ້ຮູບແບບໃດ ແລະ ໃສ່ເລກໜ້າເຈ້ຍໃຫ້ຖືກຕ້ອງ!



# ເຕັກນິກ ແລະ ເຄັດລັບ

UNIVERSITÉ DU LUXEMBOURG

ນອກນັ້ນ, ທ່ານຍັງສາມາດກວດສອບຫຼັກການຂອງການເຮັດເອກະສານອ້າງອີງໃນຮູບແບບທີ່ທ່ານມັກໄດ້ໃນແບບອອນລາຍ ແລະ ຂຽນເອກກະສານອ້າງອີງທັງໝົດຢ່າງຖືກຕ້ອງ:









# ຂອບໃຈ!



**Florence D'Ath**
Doctoral researcher / Attorney
florence.dath@uni.lu




Visit our website and follow our activities !

https://cooperationlaos.uni.lu/

UNIVERSITÉ DU LUXEMBOURG